ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 197 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 22 / 07 / 25

# ມະຕິ
## ຂອງຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍການຂຽນມາດຕາຂອງກົດໝາຍໃສ່ເອກະສານທາງລັດຖະການ

- ອີງຕາມມາດຕາ 33 ຂໍ້ທີ 1.4 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມມາດຕາ 23 ຂໍ້ທີ 7 ຂອງກົດໝາຍວ່າດ້ວຍເອກະສານ ສະບັບເລກທີ 69/ສພຊ, ລົງວັນທີ 20 ມິຖຸນາ 2019;
- ອີງຕາມໜັງສືສະເໜີ ສະບັບເລກທີ 29/ອອປສ, ລົງວັນທີ 6 ມີນາ 2025 ຂອງອົງການໄອຍະການປະຊາຊົນສູງສຸດ

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ເພື່ອເປັນບ່ອນອີງໃຫ້ແກ່ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ນຳໃຊ້ໃນການອອກເອກະສານທາງລັດຖະການ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມກົດໝາຍໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ການຂຽນບ່ອນອີງມາດຕາຂອງກົດໝາຍໃສ່ເອກະສານທາງລັດຖະການ**

ການຂຽນບ່ອນອີງມາດຕາຂອງກົດໝາຍໃສ່ເອກະສານທາງລັດຖະການ ແມ່ນໃຫ້ຂຽນມາດຕາຂຶ້ນກ່ອນ ແລ້ວຈຶ່ງຂຽນຊື່ຂອງກົດໝາຍ ຕາມທີ່ຫຼັງ **ຕົວຢ່າງ:** ອີງຕາມມາດຕາ........ຂໍ້ທີ........ຂອງກົດໝາຍວ່າດ້ວຍ............ສະບັບເລກທີ......./......., ລົງວັນທີ.......ເດືອນ........ປີ.........

**ມາດຕາ 3 ການຈັດຕັ້ງປະຕິບັດ**

ໃຫ້ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງເຜີຍແຜ່ມະຕິສະບັບນີ້ ໃຫ້ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເພື່ອຊາບ ແລະ ປະຕິບັດຕາມ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**
**ປະທານ**

**ປອ ໄຊສົມພອນ ພົມວິຫານ**